ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ  ເລກທີ 0004/ອຄ.ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 04 ມັງກອນ 2017

**<u>ແຈ້ງການ</u>**

**ເຖິງ:** - ທ່ານຫົວໜ້າ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງວຽງຈັນ;

- ປະທານສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ;
- ບັນດາຫົວໜ່ວຍທຸລະກິດ, ຜູ້ປະກອບການ, ຊາວຄ້າຂາຍ ແລະ ຫ້າງຮ້ານຕ່າງໆ.

**ເລື່ອງ:** ການຕິດລາຄາສິນຄ້າ ແລະ ຄ່າບໍລິການ.

- ອີງຕາມ ດຳລັດ 474/ນຍ, ລົງວັນທີ 18/11/2010, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ.

ເພື່ອເປັນການຮັກສາສະຖຽນລະພາບທາງດ້ານເສດຖະກິດຂອງປະເທດ, ໂດຍສະເພາະແນໃສ່ການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ໃນຂອບເຂດທົ່ວປະເທດ ໃຫ້ມີຄວາມສະຫງົບ ແລະ ໝັ້ນທ່ຽງ.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ:**

1. ໃຫ້ບັນດາຫົວໜ່ວຍທຸລະກິດ, ຜູ້ປະກອບການ, ຊາວຄ້າຂາຍ ແລະ ຫ້າງຮ້ານຕ່າງໆ ໃນຂອບເຂດທົ່ວປະເທດ ຕິດລາຄາສິນຄ້າ ແລະ ຄ່າບໍລິການ ແລະ ເປັນເງິນກີບ, ໂດຍສະເພາະແມ່ນລາຍການສິນຄ້າ ໃນບັນຊີ (ກ) ແລະ ລາຍການບໍລິການ ໃນບັນຊີ (ຂ) ທີ່ໄດ້ຄັດຕິດມາພ້ອມນີ້;
2. ລາຍການສິນຄ້າ ແລະ ລາຍການບໍລິການທີ່ຕ້ອງຕິດລາຄາທັງສອງບັນຊີທີ່ໄດ້ກ່າວມາໃນຂໍ້ 1 ເທິງນີ້ ແມ່ນຈະມີການປັບປຸງ ຢ່າງໜ້ອຍປີລະຄັ້ງ ຕາມຄວາມເໝາະສົມ;
3. ການຕິດປ້າຍລາຄາສິນຄ້າ ແລະ ຄ່າບໍລິການ ຕ້ອງສະແດງໃຫ້ເຫັນໄດ້ງ່າຍ, ຈະແຈ້ງ ແລະ ຊັດເຈນ ເພື່ອຄວາມສະດວກໃຫ້ແກ່ຜູ້ຊົມໃຊ້;
4. ມອບໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ແລະ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເຜີຍແຜ່ເນື້ອໃນຂອງແຈ້ງການສະບັບນີ້ເຖິງບັນດາຫົວໜ່ວຍທຸລະກິດ, ຜູ້ປະກອບການ, ຊາວຄ້າຂາຍ ແລະ ຫ້າງຮ້ານຕ່າງໆ ຮັບຮູ້ຢ່າງທົ່ວເຖິງໃນຂອບເຂດທົ່ວປະເທດ;
5. ມອບໃຫ້ເຈົ້າໜ້າທີ່ກວດກາການຄ້າໃນແຕ່ລະແຂວງ ແລະ ແຕ່ລະເມືອງ ເປັນເຈົ້າການຕິດຕາມ-ກວດກາ, ການໂຄສະນາ, ການຊື້-ຂາຍ, ການຕິດລາຄາສິນຄ້າ ແລະ ຄ່າບໍລິການ ແລະ ເປັນເງິນກີບ ຢ່າງເປັນປົກກະຕິ;
6. ໃນກໍລະນີ ເຈົ້າໜ້າທີ່ກວດກາການຄ້າ ຫຼື ເຈົ້າໜ້າທີ່ອື່ນໆທີ່ກ່ຽວຂ້ອງ ຫາກພົບເຫັນບັນດາຫົວໜ່ວຍທຸລະກິດ, ຜູ້ປະກອບການ, ຊາວຄ້າຂາຍ ແລະ ຫ້າງຮ້ານຕ່າງໆ ບໍ່ຕິດລາຄາສິນຄ້າ ແລະ ຄ່າບໍລິການ, ຜູ້ລະເມີດຈະຖືກສຶກສາອົບຮົມ ແລະ ຈະຖືກປັບໃໝ ຕາມດຳລັດ 474/ນຍ, ລົງວັນທີ 18/11/2010, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ;
    - ສຳລັບການປັບໃໝ ໃນກໍລະນີບໍ່ຕິດປ້າຍລາຄາ ມີໂທດປັບໃໝ ແຕ່ 500,000 ກີບ ຫາ 1,000,000 ກີບ/ຄັ້ງ/ລາຍການ;

7. ມອບໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ປະສານສົມທົບກັບພະແນກການທີ່ກ່ຽວຂ້ອງ ເພື່ອພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບໝາກຜົນ ບົນພື້ນຖານຄວາມເປັນເອກະພາບ ແລະ ປະຕິບັດຕາມພາລະບົດບາດຂອງໃຜລາວ;

8. ມອບໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ລາຍງານສະພາບການຈັດຕັ້ງປະຕິບັດການຕິດລາຄາສິນຄ້າ ແລະ ຄ່າບໍລິການ ເຖິງ ກົມການຄ້າພາຍໃນ ເປັນປະຈຳ ໃນເດືອນ, ງວດ ແລະ ປີ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດແຈ້ງການສະບັບດັ່ງກ່າວນີ້ຢ່າງເຂັ້ມງວດ.

**ລັດຖະມົນຕີ**

ບ ເຂັມມະນີ ພົນເສນາ

ບ່ອນນຳສົ່ງ:

- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ;
- ກະຊວງການເງິນ;
- ທະນາຄານ ແຫ່ງ ສປປ ລາວ;
- ສຳເນົາ.